ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມບໍລິການທະນາຄານ

ເລກທີ: 35 /ບກ

ນະຄອນຫຼວງວຽງຈັນ, ວັນທີ 06/01/2017

# ແຈ້ງການ

**ເຖິງ:** ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ,

**ເລື່ອງ:** ການປະກອບເອກະສານກ່ຽວກັບການໂອນເງິນເຂົ້າມາຈາກຕ່າງປະເທດຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ມາຫາກົມບໍລິການທະນາຄານ.

- ອີງຕາມແຈ້ງການກ່ຽວກັບການໂອນເງິນເຂົ້າປະເທດຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ສະບັບເລກທີ: 493/ທຫລ, ລົງວັນທີ 28/12/2016.

ກົມບໍລິການທະນາຄານ ຂໍຖືເປັນກຽດແຈ້ງການເພີ່ມເຕີມມາຍັງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ ກ່ຽວກັບການໂອນເງິນເຂົ້າມາຈາກຕ່າງປະເທດຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ໃຫ້ປະກອບເອກະສານມາຫາກົມບໍລິການທະນາຄານ ດັ່ງນີ້:

1. ໃບສະເໜີຫາກົມບໍລິການທະນາຄານ ເພື່ອແຈ້ງຈຳນວນເງິນ ແລະ ເລກໝາຍບັນຊີ ທີ່ຈະໂອນເຂົ້າ;
2. ໃບອະນຸຍາດການໂອນເງິນເຂົ້າມາ ຈາກກົມນະໂຍບາຍເງິນຕາ;
3. ໃບອະນຸຍາດນຳໃຊ້ເງິນທີ່ໂອນເຂົ້າມາຈາກກົມຄຸ້ມຄອງທະນາຄານທຸລະກິດ (ສຳລັບທະນາຄານທຸລະກິດ); ໃບອະນຸຍາດນຳໃຊ້ເງິນທີ່ໂອນເຂົ້າມາຈາກກົມຄຸ້ມຄອງສະຖາບັນການເງິນ (ສຳລັບສະຖາບັນການເງິນ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຄັ່ງຄັດດ້ວຍ.

ດ້ວຍຄວາມນັບຖື,

ຮັກສາການຫົວໜ້າກົມບໍລິການທະຄານ

ທະນາຄານແຫ່ງ ສປປ ລາວ ກົມບໍລິການທະນາຄານ

ພອງຈິນດາ ແສງສຸລິວົງ